ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ 1792/ທຄຕລ 2022
ນະຄອນຫຼວງວຽງຈັນ, ວັນທີ 02 AUG 2022

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາວຽກງານຕົບແຕ່ງໜ່ວຍບໍລິການຄົງເຊໂດນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາວຽກການຕົບແຕ່ງໜ່ວຍບໍລິການຄົງເຊໂດນ ເຊິ່ງຕັ້ງຢູ່ ບ້ານຄົງນະຄອນ ເມືອງຄົງເຊໂດນ ແຂວງ ສາລະວັນ ໂດຍມີເນື້ອໃນດັ່ງນີ້:

I. **ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

1) ເອກະສານດ້ານລາຄາໃບປະເມີນລາຄາລວມອາກອນມູນຄ່າເພີ່ມ 7% ຕ້ອງເປັນສະກຸນເງິນກີບ 1 ຊຸດ
2) ໜັງສືຄໍ້າປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 25/09/2022) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄໍ້າປະກັນ ຫຼື ແຊັກດັ່ງກ່າວຄືນ.
3) ໃບທະບຽນວິສາຫະກິດ ແລະ ເອກະສານກ່ຽວຂ້ອງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.
4) ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການຕົບແຕ່ງທະນາຄານ ຫຼື ສໍານັກງານຫ້ອງການຢ່າງໜ້ອຍ 3 ໂຄງການ

II. ບໍລິສັດສາມາດພົວພັນເອົາເອກະສານ ເລີ່ມແຕ່ວັນທີ 03/08/2022-19/08/2022, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 04 ຕຶກ C ສໍານັກງານໃຫຍ່, ຄ່າທໍານຽມເອກະສານ 1.000.000 ກີບ/ຊຸດ, ລາຍລະອຽດເອກະສານປະກອບມີດັ່ງນີ້:

- ໃບປະເມີນລາຍການໜ້າວຽກ 1 ຊຸດ;
- ແບບຕົບແຕ່ງ 1 ຊຸດ.

III. ສໍາລັບເງື່ອນໄຂອື່ນໆແມ່ນ ທຄຕລ ໄດ້ລະບຸຢູ່ໃນເອກະສານຊອງປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກໍາມະການ**
**ຈັດຊື້, ກໍ່ສ້າງ-ສ້ອມແປງ-ບໍລິການອື່ນໆ ທຄຕລ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ຄໍາພູດ ສິດທິລາດ**

ຜູ້ປະສານງານ:
1) ທ່ານ ສອນນາລີນ ແສງມະນີ 020 28227898
2) ທ່ານ ເພັດສະໝອນ ແສງຕະກຸນ 02077467722